ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ...1499.../ອຄ.ກຄພນ

ນະຄອນຫຼວງວຽງຈັນ, ວັນທີ...08...ກັນຍາ...2017

# ຂໍ້ຕົກລົງ
## ວ່າດ້ວຍ ການປະຕິບັດວຽກງານກວດກາການຄ້າ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017;
- ອີງຕາມ ດຳລັດວ່າດ້ວຍການກວດກາການຄ້າ, ສະບັບເລກທີ 508/ລບ, ລົງວັນທີ 4 ທັນວາ 2012;
- ອີງຕາມ ໜັງສືສະເໜີຂອງກົມການຄ້າພາຍໃນ ເລກທີ 0979/ກຄພນ.ກກຄ, ລົງວັນທີ 14 ສິງຫາ 2017.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດ ຫຼັກການ ແລະ ລະບຽບການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ ຂອງອົງການປະຕິບັດວຽກງານກວດກາການຄ້າ ແລະ ມາດຕະການປັບໃໝຕໍ່ຜູ້ລະເມີດກົດໝາຍ ກ່ຽວກັບການຄຸ້ມຄອງການຄ້າ, ການດຳເນີນທຸລະກິດທີ່ບໍ່ມີໃບທະບຽນວິສາຫະກິດ ແລະການຄ້າສິນຄ້ານອກລະບົບ ແນໃສ່ສົ່ງເສີມ ແລະ ປົກປ້ອງ ຫົວໜ່ວຍທຸລະກິດການຄ້າ ທີ່ເຄື່ອນໄຫວຖືກຕ້ອງ, ສອດຄ່ອງກັບກົດໝາຍ ແລະ ລະບຽບການ ແລະ ເປັນໄປຕາມກົນໄກເສດຖະກິດຕະຫຼາດ ທີ່ມີການດັດສົມຂອງລັດ ແລະ ສົ່ງເສີມການຜະລິດສິນຄ້າ, ປະກອບສ່ວນເຂົ້າໃນການຄຸ້ມຄອງສິນຄ້າ, ລາຄາ ແລະ ປົກປ້ອງສິດຜົນປະໂຫຍດຂອງຜູ້ຊົມໃຊ້.

**ມາດຕາ 2 ການປະຕິບັດວຽກງານກວດກາການຄ້າ**

ການປະຕິບັດວຽກງານກວດກາການຄ້າ ແມ່ນການເຄື່ອນໄຫວວຽກງານ ຂອງພະນັກງານ ແລະ ເຈົ້າໜ້າທີ່ກວດກາການຄ້າ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຕາມແຕ່ລະຂັ້ນ ໃນການຕິດຕາມ, ກວດກາ ແລະ ການນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ດ້ານການຄ້າ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ພະນັກງານກວດກາການຄ້າ ໝາຍເຖິງ ລັດຖະກອນຂອງອົງການປະຕິບັດວຽກງານກວດກາການຄ້າ ໃນແຕ່ລະຂັ້ນ;

2. ເຈົ້າໜ້າທີ່ກວດກາການຄ້າ ໝາຍເຖິງ ພະນັກງານກວດກາການຄ້າ ໃນແຕ່ລະຂັ້ນ ທີ່ຖືກແຕ່ງຕັ້ງໃຫ້ດຳເນີນການກວດກາການຄ້າໃດໜຶ່ງ ຕາມກຳນົດເວລາທີ່ຖືກແຕ່ງຕັ້ງ ໃນແຕ່ລະຄັ້ງ;

3. ແຫຼ່ງຂ່າວ ໝາຍເຖິງ ການໄດ້ຮັບຂໍ້ມູນຈາກບຸກຄົນ ຫຼື ນິຕິບຸກຄົນ, ການຈັດຕັ້ງກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການ ດ້ານການຄ້າ.

**ມາດຕາ 4 ທີ່ຕັ້ງຂອງອົງການປະຕິບັດວຽກງານກວດກາການຄ້າ**

ອົງການປະຕິບັດວຽກງານກວດກາການຄ້າ ແມ່ນການຈັດຕັ້ງໜຶ່ງ ທີ່ຂຶ້ນກັບຂະແໜງອຸດສາຫະກຳ ແລະ ການຄ້າ ຊຶ່ງປະກອບມີ ສາມ ຂັ້ນ ດັ່ງນີ້:

ຂັ້ນສູນກາງ ແມ່ນກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ໂດຍມີພະແນກກວດກາການຄ້າ ເປັນຜູ້ຊ່ວຍວຽກ;

ຂັ້ນແຂວງ ແມ່ນຂະແໜງການຄ້າພາຍໃນ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ໂດຍມີໜ່ວຍງານກວດກາການຄ້າ ເປັນຜູ້ຊ່ວຍວຽກ;

ຂັ້ນເມືອງ ແມ່ນຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ ໂດຍມີຈຸງານກວດກາການຄ້າ ເປັນຜູ້ຊ່ວຍວຽກ.

**ມາດຕາ 5 ພາລະບົດບາດຂອງອົງການປະຕິບັດວຽກງານກວດກາການຄ້າ**

ອົງການປະຕິບັດວຽກງານກວດກາການຄ້າມີພາລະບົດບາດໃນການປະຕິບັດວຽກງານກວດກາການຄ້າ ໃນແຕ່ລະຂັ້ນຄື:

1. ຂັ້ນສູນກາງ ແມ່ນກົມການຄ້າພາຍໃນ ເປັນເສນາທິການໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ໃນການຊີ້ນຳ, ນຳພາ ການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ໃນຂອບເຂດທົ່ວປະເທດ;

2. ຂັ້ນແຂວງ ແມ່ນຂະແໜງການຄ້າພາຍໃນ ເປັນເສນາທິການໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ, ໃນການປະຕິບັດວຽກງານກວດກາການຄ້າ ແລະ ຊີ້ນຳ, ນຳພາ ການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ຂອງໜ່ວຍງານກວດກາການຄ້າ ແລະ ຈຸງານກວດກາການຄ້າ ເມືອງ, ເທດສະບານ ໃນຂອບເຂດແຂວງຂອງຕົນ.

3. ຂັ້ນເມືອງ ແມ່ນຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ເປັນເສນາທິການໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ , ນະຄອນຫຼວງ ໃນການປະຕິບັດວຽກງານກວດກາການຄ້າ ໃນຂອບເຂດເມືອງຂອງຕົນ.

## ໝວດທີ 2
## ສິດ ແລະ ໜ້າທີ່ຂອງອົງການປະຕິບັດວຽກງານກວດກາການຄ້າ

**ມາດຕາ 6 ສິດ ແລະ ໜ້າທີ່ຂອງອົງການປະຕິບັດວຽກງານກວດກາການຄ້າ ຂັ້ນສູນກາງ**

ອົງການປະຕິບັດວຽກງານກວດກາການຄ້າ ຂັ້ນສູນກາງ ມີສິດ ແລະ ໜ້າທີ່ ຕົ້ນຕໍດັ່ງນີ້:

1. ຄົ້ນຄວ້າ, ສ້າງ ແລະ ປັບປຸງນິຕິກຳ, ແຜນການ,ໂຄງການ, ວາງ ແລະນຳໃຊ້ມາດຕະການຕ່າງໆໃນການຈັດຕັ້ງປະຕິບັດວຽກງານກວດກາການຄ້າ;

2. ຊີ້ນຳ, ນຳພາ, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຂອງອົງການປະຕິບັດວຽກງານກວດກາການຄ້າຂັ້ນທ້ອງຖິ່ນ ໃນຂອບເຂດທົ່ວປະເທດ;

3. ປະສານສົມທົບກັບຂະແໜງການ ຫຼື ພາກສ່ວນທີ່ກ່ຽວຂ້ອງ ເພື່ອສ້າງເງື່ອນໄຂໃນການອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຂອງອົງການປະຕິບັດວຽກງານກວດກາການຄ້າໃນແຕ່ລະຂັ້ນ;

4. ເຜີຍແຜ່, ແນະນຳ ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ດ້ານການຄ້າ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ;

5. ຈັດຝຶກອົບຮົມ, ກໍ່ສ້າງພະນັກງານກວດກາການຄ້າ ພ້ອມທັງສະເໜີແຕ່ງຕັ້ງ, ປົດຕຳແໜ່ງ ແລະ ຊັບຊ້ອນ ພະນັກງານກວດກາການຄ້າ ໃນຂອບເຂດທົ່ວປະເທດ;

6. ຄຸ້ມຄອງການນຳໃຊ້ເຄື່ອງແບບ, ກາໝາຍ, ບັດເຈົ້າໜ້າທີ່ກວດກາການຄ້າ, ພາຫະນະ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນ;

7. ແຕ່ງຕັ້ງເຈົ້າໜ້າທີ່ກວດກາການຄ້າພາຍໃນອົງການຂອງຕົນ ສົມທົບກັບເຈົ້າໜ້າທີ່ກວດກາການຄ້າແຂວງ, ນະຄອນຫຼວງ ເພື່ອດຳເນີນການເຄື່ອນໄຫວ, ຕິດຕາມກວດກາການລະເມີດກົດໝາຍ ແລະ ລະບຽບການດ້ານການຄ້າ ໃນຂອບເຂດທົ່ວປະເທດ;

8. ກວດກາ ການຄ້າສິນຄ້າ ແລະ ລາຄາ ທີ່ລະເມີດລະບຽບການຄຸ້ມຄອງການຄ້າ, ການດຳເນີນທຸລະກິດທີ່ບໍ່ມີທະບຽນວິສາຫະກິດ ແລະການຄ້າສິນຄ້ານອກລະບົບ;

9. ກວດກາຕາມປົກກະຕິ, ຕາມຄຳສັ່ງ ແລະ ຕາມແຫຼ່ງຂ່າວ ຫຼື ຕາມການສະເໜີ;

10. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງຜູ້ທີ່ໄດ້ຮັບຄວາມບໍ່ເປັນທຳອັນເນື່ອງມາຈາກການກະທຳທີ່ບໍ່ຖືກຕ້ອງ ຂອງພະນັກງານ ແລະ ເຈົ້າໜ້າທີ່ກວດກາການຄ້າ;

11. ສະຫຼຸບ, ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ປະຈຳເດືອນ, 3ເດືອນ, 6 ເດືອນ, 9 ເດືອນ ແລະ ປີ ຕໍ່ຂັ້ນເທິງ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມການມອບໝາຍຂອງຂັ້ນເທິງ ຫຼື ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 7 ສິດ ແລະ ໜ້າທີ່ຂອງອົງການປະຕິບັດວຽກງານກວດກາການຄ້າ ຂັ້ນແຂວງ**

ອົງການປະຕິບັດວຽກງານກວດກາການຄ້າ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ຕົ້ນຕໍດັ່ງນີ້:

1. ຈັດຕັ້ງປະຕິບັດນິຕິກຳ, ສ້າງແຜນການ, ໂຄງການ ແລະ ໃຊ້ມາດຕະການຕ່າງໆໃນການຈັດຕັ້ງປະຕິບັດວຽກງານການຄ້າ ໃນຂອບເຂດແຂວງຂອງຕົນ;

2. ຊີ້ນຳ, ນຳພາ, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຂອງອົງການວຽກງານກວດກາການຄ້າ ຂັ້ນເມືອງ ໃນຂອບເຂດແຂວງຂອງຕົນ;

3. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອສ້າງເງື່ອນໄຂໃນການອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຂອງອົງການປະຕິບັດວຽກງານກວດກາການຄ້າໃນຄວາມຮັບຜິດຊອບຂອງຕົນ;

4. ເຜີຍແຜ່, ແນະນຳ ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ດ້ານການຄ້າ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງໃນຂອບເຂດແຂວງຂອງຕົນ;

5. ສັງລວມຄວາມຕ້ອງການນຳໃຊ້ເຄື່ອງແບບ, ກາໝາຍ ສະເໜີຕໍ່ອົງການປະຕິບັດວຽກງານກວດກາການຄ້າ ຂັ້ນສູນກາງ ເພື່ອພິຈາລະນາຜະລິດຕາມການສະເໜີ;

6. ຄຸ້ມຄອງການນຳໃຊ້ເຄື່ອງແບບ, ກາໝາຍ, ບັດເຈົ້າໜ້າທີ່ກວດກາການຄ້າ, ພາຫະນະ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນ ພາຍໃນແຂວງຂອງຕົນ;

7. ແຕ່ງຕັ້ງເຈົ້າໜ້າທີ່ກວດກາການຄ້າພາຍໃນອົງການຂອງຕົນ ສົມທົບກັບເຈົ້າໜ້າທີ່ກວດກາການຄ້າເມືອງ ເພື່ອດຳເນີນການລົງເຄື່ອນໄຫວ, ຕິດຕາມກວດກາ ໃນຂອບເຂດແຂວງ ຂອງຕົນ;

8. ກວດກາ ການຄ້າສິນຄ້າ ແລະ ລາຄາ ທີ່ລະເມີດລະບຽບການຄຸ້ມຄອງການຄ້າ, ການດຳເນີນທຸລະກິດທີ່ບໍ່ມີທະບຽນວິສາຫະກິດ ແລະ ການຄ້າສິນຄ້ານອກລະບົບ;

9. ກວດກາຕາມປົກກະຕິ, ຕາມຄຳສັ່ງ ແລະ ຕາມແຫຼ່ງຂ່າວ ຫຼື ຕາມການສະເໜີ;

10. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງຜູ້ທີ່ໄດ້ຮັບຄວາມບໍ່ເປັນທຳ ອັນເນື່ອງມາຈາກການກະທຳທີ່ບໍ່ຖືກຕ້ອງ ຂອງພະນັກງານ ແລະ ເຈົ້າໜ້າທີ່ກວດກາການຄ້າ ພາຍໃນແຂວງ, ນະຄອນຫຼວງ ຂອງຕົນ;

11. ສະຫຼຸບ, ລາຍງານ ແລະ ສະເໜີຄຳຄິດເຫັນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ໃນ ແຂວງຂອງຕົນ ຕໍ່ອຳນາດການປົກຄອງແຂວງ, ນະຄອນຫຼວງ ແລະ ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນປະຈຳ ເດືອນ, ງວດ, 6 ເດືອນ, 9 ເດືອນ ແລະ ປີ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ ຫຼື ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 8 ສິດ ແລະ ໜ້າທີ່ຂອງອົງການປະຕິບັດວຽກງານກວດກາການຄ້າ ຂັ້ນເມືອງ**

ອົງການປະຕິບັດວຽກງານກວດກາການຄ້າ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕົ້ນຕໍດັ່ງນີ້:

1. ຈັດຕັ້ງປະຕິບັດນິຕິກຳ, ແຜນການ, ໂຄງການ ແລະ ໃຊ້ມາດຕະການຕ່າງໆ ໃນການຈັດຕັ້ງປະຕິບັດວຽກງານກວດກາການຄ້າໃນຂອບເຂດເມືອງ ຂອງຕົນ;

2. ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ໃນຂອບເຂດເມືອງຂອງຕົນ;

3. ປະສານສົມທົບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອສ້າງເງື່ອນໄຂ ໃນການອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຂອງອົງການປະຕິບັດວຽກງານກວດກາການຄ້າ ໃນຂອບເຂດເມືອງຂອງຕົນ;

4. ເຜີຍແຜ່ ແລະ ແນະນຳການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ດ້ານການຄ້າ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ ໃນຂອບເຂດເມືອງ ຂອງຕົນ;

5. ສັງລວມຄວາມຕ້ອງການນຳໃຊ້ເຄື່ອງແບບ, ກາໝາຍ ສະເໜີຕໍ່ອົງການປະຕິບັດວຽກງານກວດກາການຄ້າ ຂັ້ນແຂວງ ເພື່ອພິຈາລະນາຕາມການສະເໜີ;

6. ຄຸ້ມຄອງການນຳໃຊ້ເຄື່ອງແບບ, ກາໝາຍ, ບັດເຈົ້າໜ້າທີ່ກວດກາການຄ້າ, ພາຫະນະ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນ ພາຍໃນເມືອງຂອງຕົນ;

7. ແຕ່ງຕັ້ງເຈົ້າໜ້າທີ່ກວດກາການຄ້າພາຍໃນອົງການຂອງຕົນ ເພື່ອດຳເນີນການເຄື່ອນໄຫວ, ຕິດຕາມກວດກາໃນຂອບເຂດເມືອງຂອງຕົນ;

8. ກວດກາ ການຄ້າສິນຄ້າ ແລະ ລາຄາ ທີ່ລະເມີດລະບຽບການຄຸ້ມຄອງການຄ້າ, ການດຳເນີນທຸລະກິດທີ່ບໍ່ມີທະບຽນວິສາຫະກິດ ແລະ ການຄ້າສິນຄ້າເຖື່ອນ;

9. ກວດກາຕາມປົກກະຕິ, ຕາມຄຳສັ່ງ ແລະ ຕາມແຫຼ່ງຂ່າວ ຫຼື ຕາມການສະເໜີ;

10. ສະຫຼຸບ, ລາຍງານ ແລະ ສະເໜີຄຳຄິດເຫັນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານກວດກາການຄ້າໃນເມືອງຂອງຕົນຕໍ່ອຳນາດການປົກຄອງເມືອງ, ເທດສະບານ ແລະ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເປັນປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປີ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ ຫຼື ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 9 ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ກວດກາການຄ້າ ຂັ້ນສູນກາງ**

ເຈົ້າໜ້າທີ່ກວດກາການຄ້າຂັ້ນສູນກາງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ດຳເນີນການກວດກາໃນຂອບເຂດທົ່ວປະເທດພາຍໃຕ້ຂອບເຂດສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ແລະ 25 ຂອງດຳລັດວ່າດ້ວຍການກວດກາການຄ້າ ສະບັບເລກທີ 508/ລບ, ລົງວັນທີ 04 ທັນວາ 2012;

2. ກວດກາສາງ ຫຼື ສະຖານທີ່ເກັບມ້ຽນສິນຄ້າທີ່ຜິດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານກວດກາການຄ້າ ໃນຂອບເຂດທົ່ວປະເທດ ໃນກໍລະນີຈໍາເປັນ;

3. ລາຍງານຜົນການກວດກາແຕ່ລະຄັ້ງໃຫ້ຫົວໜ້າອົງການປະຕິບັດວຽກງານກວດກາການຄ້າຂອງຕົນ ເພື່ອພິຈາລະນານໍາໃຊ້ມາດຕະການຕໍ່ຜູ້ລະເມີດ;

4. ຄຸ້ມຄອງເອກະສານ, ຫລັກຖານ ຫຼື ຂອງກາງທີ່ຍຶດ ຫຼື ອາຍັດໄວ້ ເພື່ອລໍຖ້າຜົນຂອງການພິຈາລະນາ ຂອງຫົວໜ້າອົງການປະຕິບັດວຽກງານກວດກາການຄ້າຂອງຕົນ;

5. ຊອກຮູ້, ສ້າງແຫຼ່ງຂ່າວ ເພື່ອຊ່ວຍຕິດຕາມ ແລະ ສະໜອງຂໍ້ມູນ ກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານກວດກາການຄ້າ;

6. ປະສານສົມທົບກັບເຈົ້າໜ້າທີ່ກວດກາການຄ້າຂັ້ນແຂວງ, ຂັ້ນເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງທີ່ເຫັນວ່າມີຄວາມຈໍາເປັນໃນການດໍາເນີນການກວດກາ;

7. ນໍາໃຊ້ອຸປະກອນ, ພາຫະນະ ເຂົ້າໃນການເຄື່ອນໄຫວກວດກາເປົ້າໝາຍກະທໍາຜິດ;

8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ ຫຼື ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 10 ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ກວດກາການຄ້າ ຂັ້ນແຂວງ**

ເຈົ້າໜ້າທີ່ກວດກາການຄ້າຂັ້ນແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ດໍາເນີນການກວດກາໃນຂອບເຂດແຂວງ, ນະຄອນຫຼວງ ຂອງຕົນ ພາຍໃຕ້ຂອບເຂດສິດ ແລະ ໜ້າທີ່ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 24 ແລະ 25 ຂອງດໍາລັດວ່າດ້ວຍການກວດກາການຄ້າ ສະບັບເລກທີ 508/ລບ, ລົງວັນທີ 04 ທັນວາ 2012;

2. ກວດກາສາງ ຫຼື ສະຖານທີ່ເກັບມ້ຽນສິນຄ້າທີ່ຜິດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານ ກວດກາການຄ້າໃນຂອບເຂດແຂວງ, ນະຄອນຫຼວງ ຂອງຕົນ;

3. ລາຍງານຜົນການກວດກາແຕ່ລະຄັ້ງໃຫ້ຫົວໜ້າອົງການປະຕິບັດວຽກງານກວດກາການຄ້າຂອງຕົນ ເພື່ອພິຈາລະນານໍາໃຊ້ມາດຕະການຕໍ່ຜູ້ລະເມີດ;

4. ຄຸ້ມຄອງເອກະສານ, ຫລັກຖານ ຫຼື ຂອງກາງທີ່ຍຶດ ຫຼື ອາຍັດໄວ້ ເພື່ອລໍຖ້າຜົນຂອງການພິຈາລະນາ ຂອງຫົວໜ້າອົງການປະຕິບັດວຽກງານກວດກາການຄ້າ ຂອງຕົນ;

5. ຊອກຮູ້, ສ້າງແຫຼ່ງຂ່າວ ເພື່ອຊ່ວຍຕິດຕາມ ແລະ ສະໜອງຂໍ້ມູນ ກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານກວດກາການຄ້າ;

6. ປະສານສົມທົບກັບເຈົ້າໜ້າທີ່ກວດກາການຄ້າຂັ້ນເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງທີ່ເຫັນວ່າມີຄວາມຈໍາເປັນໃນການດໍາເນີນການກວດກາ;

7. ນໍາໃຊ້ອຸປະກອນ, ພາຫະນະ ເຂົ້າໃນການເຄື່ອນໄຫວກວດກາເປົ້າໝາຍກະທໍາຜິດ;

8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ ຫຼື ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 11 ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ກວດກາການຄ້າ ຂັ້ນເມືອງ**

ເຈົ້າໜ້າທີ່ກວດກາການຄ້າຂັ້ນເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ດໍາເນີນການກວດກາໃນຂອບເຂດເມືອງ, ເທດສະບານ ຂອງຕົນ ພາຍໃຕ້ຂອບເຂດສິດ ແລະ ໜ້າທີ່ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 24 ແລະ 25 ຂອງດໍາລັດວ່າດ້ວຍການກວດ ກາການຄ້າ ສະບັບເລກທີ 508/ລບ, ລົງວັນທີ 04 ທັນວາ 2012;

2. ກວດກາສາງ ຫຼື ສະຖານທີ່ເກັບມ້ຽນສິນຄ້າທີ່ຜິດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານ ກວດກາການຄ້າ ໃນຂອບເຂດເມືອງ, ເທດສະບານ ຂອງຕົນ;

3. ລາຍງານຜົນການກວດກາແຕ່ລະຄັ້ງໃຫ້ຫົວໜ້າອົງການປະຕິບັດວຽກງານກວດກາການຄ້າຂອງຕົນ ເພື່ອພິຈາລະນານຳໃຊ້ມາດຕະການຕໍ່ຜູ້ລະເມີດ;

4. ຄຸ້ມຄອງເອກະສານ, ຫລັກຖານ ຫຼື ຂອງກາງທີ່ຍຶດ ຫຼື ອາຍັດໄວ້ ເພື່ອລໍຖ້າຜົນຂອງການພິຈາລະນາ ຂອງຫົວໜ້າອົງການປະຕິບັດວຽກງານກວດກາການຄ້າ ຂອງຕົນ;

5. ຊອກຮູ້, ສ້າງແຫຼ່ງຂ່າວ ເພື່ອຊ່ວຍຕິດຕາມ ແລະ ສະໜອງຂໍ້ມູນ ກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານກວດກາການຄ້າ;

6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທີ່ເຫັນວ່າມີຄວາມຈຳເປັນໃນການດຳເນີນການກວດກາ;

7. ນຳໃຊ້ອຸປະກອນ, ພາຫະນະ ເຂົ້າໃນການເຄື່ອນໄຫວກວດກາເປົ້າໝາຍກະທຳຜິດ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ ຫຼື ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ໂຄງປະກອບພະນັກງານ, ການແຕ່ງຕັ້ງພະນັກງານ ແລະ ເຈົ້າໜ້າທີ່ກວດກາການຄ້າ

**ມາດຕາ 12 ໂຄງປະກອບພະນັກງານກວດກາການຄ້າ**

ໂຄງປະກອບຂອງພະນັກງານກວດກາການຄ້າ ມີດັ່ງນີ້:

ຂັ້ນສູນກາງ ປະກອບມີ: ຮອງລັດຖະມົນຕີ ຜູ້ຊີ້ນຳກົມການຄ້າພາຍໃນ, ຫົວໜ້າກົມການຄ້າພາຍໃນ, ຮອງຫົວໜ້າກົມການຄ້າພາຍໃນ ຜູ້ຊີ້ນຳ ແລະ ພະນັກງານສັງກັດຢູ່ພະແນກກວດກາການຄ້າ;

ຂັ້ນແຂວງ ປະກອບມີ: ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຮອງຫົວໜ້າພະແນກ ຜູ້ຊີ້ນຳຂະແໜງຄ້າພາຍໃນ, ຫົວໜ້າຂະແໜງການຄ້າພາຍໃນ ແລະ ພະນັກງານສັງກັດຢູ່ໜ່ວຍງານ ກວດກາການຄ້າ;

ຂັ້ນເມືອງ ປະກອບມີ: ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ຮອງຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ຜູ້ຊີ້ນຳວຽກງານກວດກາການຄ້າ ແລະ ພະນັກງານສັງກັດຢູ່ຈຸງານກວດກາການຄ້າ.

**ມາດຕາ 13 ການແຕ່ງຕັ້ງ, ປົດຕຳແໜ່ງ ແລະ ຊັບຊ້ອນພະນັກງານກວດກາການຄ້າ**

ການແຕ່ງຕັ້ງ, ປົດຕຳແໜ່ງ ແລະ ຊັບຊ້ອນ ພະນັກງານກວດກາການຄ້າ ໃນແຕ່ລະຂັ້ນ ແມ່ນລັດຖະມົນຕີ ແລະ ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຕົກລົງ ຕາມຂັ້ນຕອນ ດັ່ງນີ້:

1. ຂັ້ນສູນກາງ: ກົມການຄ້າພາຍໃນ ຄົ້ນຄວ້ານຳສະເໜີ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ໂດຍຜ່ານກົມຈັດຕັ້ງ ແລະ ພະນັກງານ ເພື່ອພິຈາລະນາ ອອກຂໍ້ຕົກລົງ;

2. ຂັ້ນແຂວງ: ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ຄົ້ນຄວ້ານຳສະເໜີຕໍ່ກົມການຄ້າພາຍໃນພິຈາລະນາ ແລ້ວນຳສະເໜີລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ໂດຍຜ່ານກົມຈັດຕັ້ງ ແລະ ພະນັກງານ ເພື່ອພິຈາລະນາ ອອກຂໍ້ຕົກລົງ;

3. ຂັ້ນເມືອງ: ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ຄົ້ນຄວ້ານຳສະເໜີ ໂດຍຜ່ານພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ສະເໜີຕໍ່ກົມການຄ້າພາຍໃນ ພິຈາລະນາ ແລ້ວນຳສະເໜີຮອງລັດຖະມົນຕີ ຜູ້ຊີ້ນຳ ກົມການຄ້າພາຍໃນ ກະຊວງອຸດສາຫະກຳ ແລະ ການຄ້າ ໂດຍຜ່ານກົມຈັດຕັ້ງ ແລະ ພະນັກງານ ເພື່ອພິຈາລະນາ ອອກຂໍ້ຕົກລົງ;

**ມາດຕາ 14 ຜູ້ທີ່ມີສິດມອບໝາຍ ຫຼື ແຕ່ງຕັ້ງເຈົ້າໜ້າທີ່ກວດກາການຄ້າ**

ຜູ້ທີ່ມີສິດມອບໝາຍ ຫຼື ແຕ່ງຕັ້ງ ເຈົ້າໜ້າທີ່ກວດກາການຄ້າ ໃນແຕ່ລະຂັ້ນ ມີດັ່ງນີ້:

1. ຂັ້ນສູນກາງ: ຮອງລັດຖະມົນຕີກະຊວງອຸສາຫະກຳ ແລະ ການຄ້າ ເປັນຜູ້ມອບໝາຍ ຫຼື ແຕ່ງຕັ້ງ ສຳລັບການດຳເນີນການກວດກາການຄ້າ ທີ່ຕິດພັນກັບຫຼາຍແຂວງ. ຫົວໜ້າກົມການຄ້າພາຍໃນ ເປັນຜູ້ມອບໝາຍ ຫຼື ແຕ່ງຕັ້ງ ສຳລັບການດຳເນີນການກວດກາການຄ້າ ສະເພາະແຂວງໃດໜຶ່ງ;

2. ຂັ້ນແຂວງ: ຮອງຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເປັນຜູ້ມອບໝາຍ ຫຼື ແຕ່ງຕັ້ງ ສຳລັບການດຳເນີນການກວດກາການຄ້າ ທີ່ຕິດພັນກັບຫຼາຍເມືອງ. ຫົວໜ້າຂະແໜງ ການຄ້າພາຍໃນ ເປັນຜູ້ມອບໝາຍ ຫຼື ແຕ່ງຕັ້ງ ສຳລັບການດຳເນີນການກວດກາການຄ້າ ສະເພາະເມືອງໃດໜຶ່ງ;

3. ຂັ້ນເມືອງ: ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ ເປັນຜູ້ມອບໝາຍ ຫຼື ແຕ່ງຕັ້ງ.

**ມາດຕາ 15 ເງື່ອນໄຂຂອງພະນັກງານ ແລະ ເຈົ້າໜ້າທີ່ກວດກາການຄ້າ**

ພະນັກງານກວດກາການຄ້າ ຕ້ອງມີເງື່ອນໄຂພື້ນຕົ້ນຄື: ເປັນລັດຖະກອນສົມບູນ ແລະ ຮຽນຈົບວິຊາ ສະເພາະກົດໝາຍ ຫຼື ເສດຖະສາດ ຫຼື ການຄ້າ ຫຼື ຈົບຫຼັກສູດຝຶກອົບຮົມກ່ຽວກັບວຽກງານກວດກາການຄ້າ.

ເຈົ້າໜ້າທີ່ກວດກາການຄ້າຕ້ອງມີເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 23 ຂອງດຳລັດວ່າດ້ວຍການກວດກາການຄ້າ ສະບັບເລກທີ 508/ລບ, ລົງວັນທີ 04/12/2012.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 16 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່, ກົດໜ່ວງຖ່ວງດຶງ ແລະ ຂັດຂວາງການປະຕິບັດໜ້າທີ່ຂອງ ພະນັກງານ ແລະ ເຈົ້າໜ້າທີ່ກວດກາການຄ້າ;
2. ໃຫ້ການຊ່ວຍເຫຼືອ, ປົກປ້ອງຜູ້ລະເມີດກົດໝາຍ ແລະ ລະບຽບການ ດ້ານການຄ້າ;
3. ເປັນສື່ກາງ, ໃຫ້ສິນບົນ ແລະຮັບສິນບົນ ເພື່ອຜົນປະໂຫຍດໃນວຽກງານກວດກາການຄ້າ;
4. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 17 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ**

ຫ້າມຜູ້ດຳເນີນທຸລະກິດ ມີພຶດຕິກຳ ດັ່ງນີ້:

1. ລະເມີດກົດໝາຍ ແລະ ລະບຽບການ ດ້ານການຄ້າ;
2. ປອມຕົວ ແລະ ແອບອ້າງ ເປັນເຈົ້າໜ້າທີ່ກວດກາການຄ້າ;
3. ບໍ່ໃຫ້ຄວາມຮ່ວມມື, ຂັດຂວາງ, ສ້າງຄວາມຫຍຸ້ງຍາກ, ຂົ່ມຂູ່, ໃຊ້ຄວາມຫຍາບຄາຍ, ໃຊ້ຄວາມຮຸນແຮງ ຫຼື ທຳຮ້າຍຮ່າງກາຍເຈົ້າໜ້າທີ່ກວດກາການຄ້າ;
4. ສັບປ່ຽນ, ທຳລາຍ ຫຼື ເຮັດໃຫ້ຂອງກາງ ຫຼື ຫຼັກຖານເສຍຫາຍ;
5. ປອມແປງ, ດັດແປງ ເອກະສານ ທີ່ພົວພັນກັບການດຳເນີນການກວດກາການຄ້າ;
6. ມີພຶດຕິກຳອື່ນທີ່ລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 18 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ກວດກາການຄ້າ.**

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ກວດກາການຄ້າ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ ແລະ ໜ້າທີ່ ເພື່ອຫາຜົນປະໂຫຍດສ່ວນຕົວ;

2. ເອົາບັດກວດກາການຄ້າ ຫຼື ເຄື່ອງແບບ ໃຫ້ບຸກຄົນອື່ນນໍາໃຊ້ ບໍ່ວ່າຈະເຈດຕະນາ ຫຼື ບໍ່ເຈດຕະນາກໍ່ຕາມ;
3. ເອົາອາວຸດ ທີ່ໄດ້ຮັບການມອບໝາຍໃຫ້ບຸກຄົນອື່ນນໍາໃຊ້ ບໍ່ວ່າຈະເຈດຕະນາ ຫຼື ບໍ່ເຈດຕະນາກໍ່ຕາມ;
4. ບໍ່ປະຕິບັດຕາມຂັ້ນຕອນການກວດກາ ຕາມທີ່ກໍານົດໄວ້ໃນ ມາດຕາ 9 ຂອງດໍາລັດວ່າດ້ວຍການກວດກາການຄ້າ ສະບັບເລກທີ 508/ລບ, ລົງວັນທີ 4 ທັນວາ 2012;
5. ນຸ່ງເຄື່ອງແບບໄປເຮັດວຽກໃນນາມສ່ວນຕົວ;
6. ສັບປ່ຽນ, ທໍາລາຍ ຫຼື ເຮັດໃຫ້ຂອງກາງ ຫຼື ຫຼັກຖານເສຍຫາຍ;
7. ມີພຶດຕິກໍາອື່ນທີ່ລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 19 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍ, ດໍາລັດວ່າດ້ວຍການກວດກາການຄ້າ, ຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນ ກ່ຽວກັບວຽກງານກວດກາການຄ້າ ຈະຖືກປະຕິບັດມາດຕະການກ່າວເຕືອນ,ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ກໍລະນີ ໜັກ ຫຼື ເບົາ.

**ມາດຕາ 20 ມາດຕະການກ່າວເຕືອນ ແລະ ສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ມີລັກສະນະເບົາ ອົງການປະຕິບັດວຽກງານກວດກາຄ້າ ຕ້ອງກ່າວເຕືອນ ແລະ ເຮັດບົດບັນທຶກໄວ້. ຖ້າເປັນການລະເມີດຂໍ້ຫ້າມທີ່ບໍ່ເປັນການກະທໍາຜິດທາງອາຍາ ຫຼື ບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ ແຕ່ຜູ້ລະເມີດຫາກມີຄວາມຈິງໃຈລາຍງານ, ຮັບສາລະພາບຕໍ່ການກະທໍາທີ່ບໍ່ຖືກຕ້ອງຂອງຕົນ ກໍຈະຖືກສຶກສາອົບຮົມ ແລະ ບັນທຶກໄວ້ຢ່າງເປັນລາຍລັກອັກສອນ.

**ມາດຕາ 21 ມາດຕະການປັບໃໝ ແລະ ມາດຕະການໂທດເພີ່ມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການກວດກາການຄ້າ ຈະຖືກມາດຕະການປັບໃໝ ແລະ ມາດຕະການໂທດເພີ່ມໃນແຕ່ລະກໍລະນີ ດັ່ງນີ້:

**ກ. ການລະເມີດລະບຽບການຄຸ້ມຄອງການຄ້າ**

ການລະເມີດລະບຽບການຄຸ້ມຄອງການຄ້າ ຈະຖືກປັບໃໝ ແຕ່ລະກໍລະນີ ດັ່ງນີ້:

1. ບໍ່ຕິດປ້າຍລາຄາ ມີໂທດປັບໃໝແຕ່ 500.000 ກີບຫາ 1.000.000 ກີບ/ຄັ້ງ/ລາຍການ;
2. ແຈ້ງຂໍ້ມູນເທັດກ່ຽວກັບໂຄງປະກອບລາຄາ ຫຼື ຄັງແຮສໍາຮອງ ມີໂທດປັບໃໝແຕ່ 1.000.000 ກີບ ຫາ 3.000.000 ກີບ/ຄັ້ງ/ລາຍການ;
3. ບໍ່ແຈ້ງໂຄງປະກອບລາຄາ ມີໂທດປັບໃໝແຕ່ 1.000.000 ກີບ ຫາ 3.000.000 ກີບ/ຄັ້ງ/ລາຍການ;
4. ນໍາເອົາສິນຄ້າທີ່ມີໄວ້ໃນຄັງແຮສໍາຮອງອອກຈໍາໜ່າຍໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງລາຄາ ມີໂທດປັບໃໝແຕ່ 1.000.000 ກີບ ຫາ 3.000.000 ກີບ/ຄັ້ງ/ລາຍການ;
5. ຢຸດ, ປະຕິເສດ ຫຼື ແກ່ຍາວເວລາການຈໍາໜ່າຍ ຫຼື ການບໍລິການ ໂດຍບໍ່ມີເຫດຜົນ ໃນເມື່ອມີຄໍາສັ່ງ ຈາກອົງການຄຸ້ມຄອງລາຄາມີໂທດປັບໃໝແຕ່ 1.000.000 ກີບ ຫາ 3.000.000 ກີບ/ຄັ້ງ/ລາຍການ;

6. ນຳໃຊ້ໂຄງປະກອບລາຄາໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງລາຄາ ມີໂທດປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ/ຄັ້ງ/ລາຍການ;

7. ການໂຄສະນາສິນຄ້າທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ເຊັ່ນ: ບໍ່ຖືກກັບປະເພດ, ຊະນິດສິນຄ້າ, ຄຸນລັກສະນະ, ຄຸນນະພາບ, ມາດຕະຖານຂອງສິນຄ້າ ຈະຖືກປັບໃໝ ແຕ່ 500.000 ກີບ ຫາ 5.000.000 ກີບແລ້ວແຕ່ລະກໍລະນີ ພ້ອມທັງອາຍັດ ຫຼື ຍຶດສິນຄ້າດັ່ງກ່າວ ຫຼື ທຳລາຍຖິ້ມ;

8. ການໂຄສະນາສິນຄ້າມີລັກຊະນະສຽດສີ ແລະ ໃສ່ຮ້າຍປ້າຍສີສິນຄ້າ ແລະ ການບໍລິການຂອງຜູ້ອື່ນ ຈະຖືກປັບໃໝແຕ່ 50.000 ກີບ ຫາ 300.000 ກີບ ໃນກໍລະນີດັ່ງກ່າວນີ້ ຖ້າຫາກມີຝ່າຍໃດຝ່າຍໜຶ່ງມາສະເໜີ ຫຼື ຮ້ອງຂໍຈຶ່ງຈະດຳເນີນ ແລະ ກວດກາ;

9. ບໍ່ຕິດສະຫຼາກ, ຕິດສະຫຼາກສິນຄ້າບໍ່ຖືກຕ້ອງ ແລະ ບໍ່ມີສະຫຼາກເປັນພາສາລາວ ໂດຍສະເພາະສິນຄ້າທີ່ມີຄວາມສ່ຽງຕໍ່ຊີວິດ, ສຸຂະພາບ ແລະ ຄວາມປອດໄພຂອງຜູ້ຊົມໃຊ້ ຈະຖືກປັບໃໝ ແຕ່ 500.000 ກີບ ຫາ 5.000.000 ກີບ/ຄັ້ງ/ລາຍການ ຫຼື ອາຍັດ ຫຼື ຍຶດສິນຄ້າດັ່ງກ່າວ;

10. ປອມແປງສະຫຼາກ, ຜະລິດ ຫຼື ນຳໃຊ້ສະຫຼາກປອມກ່ຽວກັບປະເພດສິນຄ້າ ຈະຖືກປັບໃໝແຕ່ 200.000 ກີບ ຫາ 2.000.000 ກີບ/ຄັ້ງ/ລາຍການ ພ້ອມທັງອາຍັດ ຫຼື ຍຶດສິນຄ້າດັ່ງກ່າວ ແລະ ຈະຖືກດຳເນີນຄະດີຕາມກົດໝາຍອາຍາ;

11. ການຜະລິດ, ນຳເຂົ້າ, ຈຳໜ່າຍສິນຄ້າທີ່ບໍ່ມີຄຸນນະພາບ, ບໍ່ໄດ້ມາດຕະຖານ, ສິນຄ້າປອມແປງສິນຄ້າ ລອກຮຽນແບບ, ສິນຄ້າຕ້ອງຫ້າມ ໂດຍເຈດຕະນາ ແລະ ລະເມີດໂດຍບໍ່ເຈດຕະນາເປັນຄັ້ງທີ ສອງ ເຊິ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝ ສອງເທົ່າຕົວຂອງມູນຄ່າຄວາມເສຍຫາຍ ຫຼືມູນຄ່າຂອງສິນຄ້າເຄື່ອງຂອງທີ່ລະເມີດ ພ້ອມນັ້ນ ຍັງຮັບຜິດຊອບຄ່າສິ້ນເປືອງຕ່າງໆ ໃນການທຳລາຍສິນຄ້າ ເຄື່ອງຂອງທີ່ລະເມີດ (ມາດຕາ 119 ກົດໝາຍວ່າດ້ວຍມາດຕະຖານ ສະບັບເລກທີ 49/ສພຊ, ລົງວັນທີ 18 ກໍລະກົດ 2014);

12. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດລະບຽບກົດໝາຍ ກ່ຽວກັບຊັບສິນທາງປັນຍາ ໂດຍເຈດຕະນາ ຫຼື ດ້ວຍຄວາມບໍ່ລະມັດລະວັງເປັນຄັ້ງທີສອງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝ 1% ຂອງມູນຄ່າຄວາມເສຍຫາຍ ຫຼື ມູນຄ່າສິນຄ້າເຄື່ອງຂອງທີ່ລະເມີດແຕ່ລະຄັ້ງ; ຄັ້ງທີສອງ ໂດຍເຈດຕະນາ ຫຼື ເປັນອາຈິນ ຈະຖືກປັບໃໝ 5% ຂອງມູນຄ່າຄວາມເສຍຫາຍ ຫຼືມູນຄ່າສິນຄ້າເຄື່ອງຂອງທີ່ລະເມີດແຕ່ລະຄັ້ງ (ມາດຕາ 160 ກົດໝາຍວ່າດ້ວຍຊັບສິນທາງປັນຍາ ສະບັບເລກທີ 01/ສພຊ, ລົງວັນທີ 20 ທັນວາ 2011).

13. ຂາຍ ຫຼື ສະໜອງອາຫານໃຫ້ແກ່ສັງຄົມບໍ່ມີຄວາມປອດໄພ, ບໍ່ໄດ້ມາດຕະຖານ, ເຈືອປົນ, ປົນເປື້ອນຫຼື ໝົດອາຍຸການບໍລິໂພກ ຈະຖືກອາຍັດ ຫຼື ຍຶດ ແລະ ປັບໃໝຕາມມູນຄ່າຂອງສິນຄ້າ ແລະ ສະເໜີໃຫ້ພາກສ່ວນກ່ຽວຂ້ອງ, ບໍ່ອະນຸຍາດໃຫ້ຜະລິດ, ນຳເຂົ້າ ແລະ ຈໍລະຈອນຈຳໜ່າຍຜະລິດຕະພັນນັ້ນ. (ມາດຕາ 50 ກົດໝາຍອາຫານ ແລະ ມາດຕາ 9 ຂໍ້ຕົກລົງຂອງລັດຖະມົນຕີກະຊວງສາທາລະນະສຸກ ວ່າດ້ວຍສະຫຼາກຂອງຜະລິດຕະພັນອາຫານທີ່ບັນຈຸໃນເຄື່ອງຫຸ້ມຫໍ່ ເລກທີ 519/ກສຊ, ລົງວັນທີ 18 ມີນາ 2009);

14. ການປະຕິບັດມາດຕະການຕໍ່ຜູ້ລະເມີດ ຄຳສັ່ງວ່າດ້ວຍການຕິດສະຫຼາກສິນຄ້າເປັນພາສາລາວ ຂອງຜູ້ຜະລິດ, ຜູ້ນຳເຂົ້າ, ຜູ້ຂາຍຍົກ ແລະ ຂາຍຍ່ອຍສິນຄ້າ ໃຫ້ຕິດສະຫຼາກສິນຄ້າເປັນພາສາລາວສະບັບເລກທີ 2501/ອຄ.ຄພນ, ລົງວັນທີ 16/12/2015 ປະຕິບັດ ດັ່ງນີ້:

- ລະເມີດຄັ້ງທີໜຶ່ງ ໃຫ້ຕັກເຕືອນ ແລະ ເຮັດບົດບັນທຶກເຊັນຮັບຮູ້ການລະເມີດ;
- ລະເມີດຄັ້ງທີສອງ ໃຫ້ດຳເນີນການປັບໃໝ ແຕ່ 500.000 ກີບ ຫາ 1.000.000 ກີບ (ສຳລັບຮ້ານຄ້າຂາຍຍ່ອຍ), ແຕ່ 5.000.000 ກີບ ຫາ 7.000.000 ກີບ (ສຳລັບຜູ້ຜະລິດ, ຜູ້ນຳເຂົ້າ, ຜູ້ຂາຍຍົກ ແລະຜູ້ເປັນຕົວແທນຈຳໜ່າຍ);

- ລະເມີດຄັ້ງທີ່ສາມ ໃຫ້ດຳເນີນການປັບໃໝແຕ່ 1.000.000 ກີບ ຫາ 2.000.000 ກີບ ແລະ ອາຍັດສິນຄ້າທີ່ວາງຂາຍທີ່ບໍ່ໄດ້ຕິດສະຫຼາກສິນຄ້າເປັນພາສາລາວ (ສໍາລັບຮ້ານຄ້າຂາຍຍ່ອຍ), ແຕ່ 7.000.000 ກີບ ຫາ 9.000.000 ກີບ ພ້ອມທັງໃຫ້ໂຈະ ຫຼື ຖອນໃບທະບຽນວິສາຫະກິດ (ສໍາລັບຜູ້ຜະລິດ, ນໍາເຂົ້າ, ຂາຍຍົກ ແລະ ຜູ້ເປັນຕົວແທນຈໍາໜ່າຍ).

15. ມາດຕະການຄຸ້ມຄອງເງິນຕາຕ່າງປະເທດຕາມ ຂໍ້ 1 ແລະ 2 ມາດຕາ 49 ມາດຕະການປັບໃໝຂອງກົດໝາຍ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014 ດັ່ງນີ້:

- ຕິດປະກາດ ຫຼື ໂຄສະນາ ລາຄາ ແລະ ຄ່າອື່ນໃນ ສປປ ລາວ ເປັນເງິນຕາຕ່າງປະເທດຈະຖືກປັບໃໝ ໜຶ່ງລ້ານ (1.000.000) ກີບຕໍ່ຄັ້ງ;
- ຮັບຊໍາລະ ຫຼື ຊໍາລະຄ່າສິນຄ້າ, ຄ່າບໍລິການເປັນເງິນຕາຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈະຖືກປັບໃໝສາມລ້ານ (3.000.000) ກີບຕໍ່ຄັ້ງ;

ໃນກໍລະນີ້ ມີການລະເມີດຜ່ານມາແລ້ວ ໄດ້ທໍາການລະເມີດອີກ ຈະຖືກປັບໃໝສອງເທົ່າຂອງມູນຄ່າປັບໃໝ ຄັ້ງຫຼ້າສຸດ.

**ຂ. ການດຳເນີນທຸລະກິດທີ່ບໍ່ຖືກຕ້ອງ**

ການດໍາເນີນທຸລະກິດທີ່ບໍ່ຖືກຕ້ອງຕາມທີ່ໄດ້ກໍານົດໄວ້ ໃນມາດຕາ 212, 213, 216, 217, 218 ກົດໝາຍວ່າດ້ວຍວິສາຫະກິດສະບັບເລກທີ46/ສພຊ, ລົງວັນທີ 26 ທັນວາ 2013 ຈະຖືກສຶກສາອົບຮົມ ຫຼື ປັບໃໝ ດັ່ງນີ້:

1. ການດໍາເນີນທຸລະກິດໂດຍບໍ່ຂຶ້ນທະບຽນວິສາຫະກິດ: ບຸກຄົນໃດທີ່ໄດ້ດໍາເນີນທຸລະກິດ ໂດຍບໍ່ຂຶ້ນທະບຽນວິສາຫະກິດ ຈະຖືກປັບໃໝ ແຕ່ 1.000.000 ຫາ 10.000.000 ກີບຕໍ່ຄັ້ງ;
2. ບຸກຄົນ ຫຼື ນິຕິບຸກຄົນທີ່ໄດ້ດໍາເນີນທຸລະກິດໂດຍບໍ່ຖືກວັດຖຸປະສົງຂອງວິສາຫະກິດຕົນຈະຖືກສຶກສາອົບຮົມ ຫຼື ປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບຕໍ່ຄັ້ງ;
3. ການບໍ່ຕິດປ້າຍວິສາຫະກິດ ຫຼື ການໃຊ້ຊື່ວິສາຫະກິດບໍ່ຖືກຕ້ອງກັບຮູບການ ຫຼື ຮູບແບບວິສາຫະກິດຂອງຕົນຈະຖືກສຶກສາອົບຮົມ ຫຼື ປັບໃໝ 200.000 ກີບ ຕໍ່ຄັ້ງພາຍຫຼັງໄດ້ແຈ້ງໃຫ້ຊາບແລ້ວເຈັດວັນ;
4. ການໃຊ້ຊື່ວິສາຫະກິດທີ່ເກືອດຫ້າມຕາມທີ່ໄດ້ກໍານົດໄວ້ໃນມາດຕາ 27 ຂອງກົດໝາຍວ່າດ້ວຍວິສາຫະກິດຈະຖືກສຶກສາອົບຮົມ ຫຼື ປັບໃໝ 300.000 ກີບ ແລະ ໃຫ້ຢຸດເຊົາການໃຊ້ຊື່ວິສາຫະກິດນັ້ນ;
5. ການບໍ່ປົດປ້າຍຊື່ວິສາຫະກິດພາຍຫຼັງທີ່ວິສາຫະກິດຖືກຍຸບເລີກແລ້ວຕາມທີ່ໄດ້ກໍານົດໄວ້ໃນວັກໜຶ່ງມາດຕາ 31 ຂອງກົດໝາຍວ່າດ້ວຍວິສາຫະກິດຈະຖືກສຶກສາອົບຮົມ ຫຼື ປັບໃໝ 500.000ກີບ ແລະ ໃຫ້ປົດປ້າຍອອກ.

**ຄ. ການຄ້າສິນຄ້ານອກລະບົບ**

ການຄ້າສິນຄ້ານອກລະບົບຈະຖືກສຶກສາອົບຮົມ ຫຼື ປັບໃໝ ດັ່ງນີ້:

1. ການນໍາເອົາສິນຄ້າ ອອກ-ເຂົ້າ ບໍ່ຖືກຕາມດ່ານທີ່ໄດ້ບົ່ງໄວ້ໃນໃບອະນຸຍາດ ແຕ່ໄດ້ເສຍພັນທະຕ່າງໆ ຕາມລະບຽບກົດໝາຍຖືກຕ້ອງ ຈະຖືກສຶກສາອົບຮົມກ່າວເຕືອນ ແລະ ປັບໃໝ ດັ່ງນີ້:
   - ຕໍ່າກວ່າ 5.000.000 ກີບ ຈະຖືກສຶກສາອົບຮົມ, ກ່າວເຕືອນ;
   - ແຕ່ 5.000.001 ກີບ ຫາ 10.000.000 ກີບ ຈະຖືກປັບໃໝຫ້າສ່ວນຮ້ອຍ (5%) ຂອງມູນຄ່າສິນຄ້າ;
   - ແຕ່ 10.000.001 ກີບຂຶ້ນໄປ ຈະຖືກປັບໃໝສິບສ່ວນຮ້ອຍ (10%) ຂອງມູນຄ່າສິນຄ້າ;
2. ການລະເມີດລະບຽບການຄຸ້ມຄອງການນໍາເຂົ້າ ແລະ ການສົ່ງອອກສິນຄ້າ ຕາມທີ່ໄດ້ກໍານົດໄວ້ໃນ ດໍາລັດວ່າດ້ວຍການນໍາເຂົ້າ ແລະ ສົ່ງອອກສິນຄ້າ, ເລກທີ 114/ລບ, ລົງວັນທີ 6 ເມສາ 2011 ແລະ ດໍາລັດ

ວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ ສະບັບເລກທີ 180/ນຍ, ລົງວັນທີ 07/07/2009 ເຊັ່ນ:

- ນຳເຂົ້າ ຫຼື ສົ່ງອອກສິນຄ້າ ທີ່ຢູ່ໃນລາຍການສິນຄ້າເກືອດຫ້າມນຳເຂົ້າ ຫຼື ການສົ່ງອອກ ຍົກເວັ້ນໃນກໍລະນີທີ່ໄດ້ຮັບອະນຸຍາດ ຈາກລັດຖະບານແຫ່ງ ສປປ ລາວ;

- ນຳເຂົ້າ ຫຼື ສົ່ງອອກສິນຄ້າ ທີ່ຢູ່ໃນລາຍການສິນຄ້າທີ່ຕ້ອງຂໍອະນຸຍາດກ່ອນການນຳເຂົ້າ ຫຼື ສົ່ງອອກ ກ່ອນໄດ້ຮັບອະນຸຍາດ;

- ນຳເຂົ້າ ຫຼື ສົ່ງອອກສິນຄ້າ ທີ່ຢູ່ໃນລາຍການທີ່ຕ້ອງຜ່ານມາດຕະການສຸຂາອານາໄມ ແລະ ສຸຂານາໄມພືດ ຫຼື ລະບຽບການທາງດ້ານເຕັກນິກ ກ່ອນໄດ້ຜ່ານການກວດສອບ ຫຼື ການຢັ້ງຢືນມາດຕະການ ສຸຂາອານາໄມ ຫຼື ສຸຂານາໄມພືດ ຫຼື ລະບຽບການທາງດ້ານເຕັກນິກ;

- ການປອມແປງ, ປ່ຽນແປງ ຫຼື ຊື້ຂາຍເອກະສານຕ່າງໆກ່ຽວກັບການຊື້ຂາຍສິນຄ້າ ເປັນຕົ້ນ: ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ, ໃບອະນຸຍາດນຳເຂົ້າ-ສົ່ງອອກສິນຄ້າ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີການລະເມີດດັ່ງກ່າວມາໃນຂໍ້ 3.2 ເທິງນີ້ ຈະຖືກປັບໃໝສາມສິບສ່ວນຮ້ອຍ (30%) ຂອງມູນຄ່າສິນຄ້າ ແລະ ຕ້ອງໄດ້ປະຕິບັດພັນທະຕ່າງໆ ໃຫ້ຄົບຖ້ວນຕາມລະບຽບ ກົດໝາຍ.

ຖ້າມີການກະທຳຜິດຄັ້ງທີສອງ ຈະຖືກປັບໃໝຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່າສິນຄ້າ ແລະ ຕ້ອງປະຕິບັດພັນທະຕ່າງໆ ໃຫ້ຄົບຖ້ວນຕາມກົດໝາຍ ແລະ ລະບຽບການ.

ສິນຄ້າ, ເຄື່ອງຂອງ ພ້ອມທັງວັດຖຸສິ່ງຂອງທີ່ນຳໃຊ້ເພື່ອປິດບັງ ແລະ ພາຫະນະທີ່ນຳໃຊ້ເຂົ້າໃນການກະທຳຜິດ ທີ່ບໍ່ແມ່ນປະເພດສິນຄ້າຄວບຄຸມ ທີ່ຖືກຍຶດໄວ້ນັ້ນ ໃຫ້ສົ່ງຄືນເຈົ້າຂອງພາຍຫຼັງດຳເນີນການແກ້ໄຂແລ້ວ.

3. ການຊື້-ຂາຍ ສິນຄ້າທີ່ລັກລອບ ຫຼື ລົບຫຼີກລະບຽບການຄຸ້ມຄອງການຄ້າ ເຊັ່ນ:

- ການລັກລອບນຳເຂົ້າ-ສົ່ງອອກສິນຄ້າ, ການລົບຫຼີກພັນທະ ຫຼື ຄ່າທຳນຽມຕ່າງໆ ຫຼື ປະຕິບັດພັນທະ ຫຼື ຄ່າທຳນຽມບໍ່ເຕັມອັດຕາສ່ວນ ຈະຖືກປັບໃໝເຈັດສິບສ່ວນຮ້ອຍ (70%) ຂອງມູນຄ່າສິນຄ້າເຄື່ອງຂອງ ແລະ ຕ້ອງປະຕິບັດພັນທະຕ່າງໆ ຢ່າງຄົບຖ້ວນຕາມລະບຽບກົດໝາຍ;

- ຖ້າເປັນການກະທຳຜິດຄັ້ງທີສອງ ຈະຖືກປັບໃໝຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່າສິນຄ້າເຄື່ອງຂອງ ແລະ ຕ້ອງປະຕິບັດພັນທະຕ່າງໆ ຢ່າງຄົບຖ້ວນຕາມລະບຽບກົດໝາຍ;

- ສິນຄ້າ, ເຄື່ອງຂອງ ພ້ອມທັງວັດຖຸສິ່ງຂອງທີ່ນຳໃຊ້ເພື່ອປິດບັງ ແລະ ພາຫະນະທີ່ນຳໃຊ້ເຂົ້າໃນການກະທຳຜິດທີ່ບໍ່ແມ່ນປະເພດສິນຄ້າຄວບຄຸມທີ່ຖືກຍຶດໄວ້ນັ້ນ ໃຫ້ສົ່ງຄືນເຈົ້າຂອງພາຍຫຼັງດຳເນີນການແກ້ໄຂແລ້ວ;

- ຖ້າຍັງມີການລະເມີດຕື່ມອີກຈະຖືກປັບໃໝຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່າສິນຄ້າ, ເຄື່ອງຂອງສ່ວນສິນຄ້າ, ເຄື່ອງຂອງທີ່ຍຶດ ຫຼື ອາຍັດໄວ້ນັ້ນໃຫ້ຕົກເປັນຂອງລັດ;

- ສິນຄ້າ, ເຄື່ອງຂອງທີ່ຕົກເປັນຂອງລັດ ແມ່ນໃຫ້ສະເໜີຕໍ່ອົງການສານປະຊາຊົນ ອອກຂໍ້ຕົກລົງຮິບເປັນຂອງລັດຕາມລະບຽບການ ແລ້ວຈຶ່ງສາມາດນຳໄປຂາຍ ຫຼື ນຳໃຊ້ ຫຼື ທຳລາຍຖິ້ມໄດ້.

4. ການຄ້າ-ຂາຍສິນຄ້າປະເພດໄມ້ທີ່ຜິດລະບຽບກົດໝາຍ ເຊັ່ນ: ການຄ້າຂາຍສິນຄ້າປະເພດໄມ້ຫວງຫ້າມໂດຍບໍ່ໄດ້ຮັບອະນຸຍາດ, ການຄ້າຂາຍປະເພດໄມ້ຕ່າງໆທີ່ບໍ່ມີເອກະສານ ຫຼື ເກີນຈຳນວນ, ບໍລິມາດໃນເອກະສານ, ການລັກລອບສົ່ງອອກສິນຄ້າປະເພດໄມ້ທ່ອນ, ໄມ້ແປຮູບ, ຕໍໄມ້, ປຸດໄມ້ ຈະຖືກປັບໃໝ 1 ເທົ່າຂອງມູນຄ່າສິນຄ້າ ຫຼື ວັດຖຸທີ່ລະເມີດ ພ້ອມທັງຮິບສ່ວນທີ່ລະເມີດນັ້ນເປັນຂອງລັດ. ການຮິບເປັນຂອງລັດຕ້ອງປະຕິບັດຕາມກົດໝາຍອາຍາ ຫຼື ລະບຽບກົດໝາຍທີ່ກ່ຽວຂ້ອງ.

5. ການຄ້າຂາຍສິນຄ້າ, ການໃຫ້ບໍລິການ ໂດຍບໍ່ອອກໃບເກັບເງິນ ຫຼື ອອກໃບເກັບເງິນບໍ່ຖືກຕ້ອງຕາມລະບຽບຂອງອາກອນ (ຍົກເວັ້ນກໍລະນີທີ່ບໍ່ຈຳເປັນຕ້ອງອອກໃບບິນເກັບເງິນ) ຈະຖືກປັບໃໝຊາວສ່ວນ

ຮ້ອຍ (20%) ສຳລັບຄັ້ງທີໜຶ່ງ, ສີ່ສິບສ່ວນຮ້ອຍ (40%) ສຳລັບຄັ້ງທີສອງ, ຫົກສິບສ່ວນຮ້ອຍ (60%) ສຳລັບຄັ້ງທີສາມ ຂອງຈຳນວນອາກອນທີ່ໄລ່ໃຫ້ເສຍ ພ້ອມທັງມອບພັນທະອາກອນ ໃຫ້ລັດຢ່າງຄົບຖ້ວນຕາມກົດໝາຍ ແລະ ລະບຽບການ.

6. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ໂຮງຈັກໂຮງງານທີ່ດຳເນີນທຸລະກິດນຳເຂົ້າ, ຜະລິດ, ຈຳໜ່າຍຜະລິດຕະພັນຢາສູບ ແລະ ຜະລິດຕະພັນຄ້າຍຄືຢາສູບ ຢູ່ ສປປ ລາວ ທີ່ບໍ່ຖືກຕ້ອງ ເຊັ່ນ: ການບໍ່ພິມຄຳເຕືອນກ່ຽວກັບສຸຂະພາບ, ໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບ ຫຼື ພິມບໍ່ຖືກຕາມມາດຕະຖານ ຂອງກະຊວງສາທາລະນະສຸກ, ການນຳເຂົ້າ, ຜະລິດ ແລະ ຈຳໜ່າຍເຂົ້າໜົມ, ອາຫານ, ເຄື່ອງດື່ມ ແລະ ອື່ນໆ ທີ່ອອກແບບ ຫຼື ຮູບຊົງຄ້າຍຄືຜະລິດຕະພັນຢາສູບ; ໂຄສະນາ ຫຼື ກະທຳການໃດໆ ທີ່ມີລັກສະນະຊັກຊວນ, ຈູງໃຈ ຊຶ່ງເປັນການສົ່ງເສີມໃຫ້ເກີດຄວາມສົນໃຈ ແລະ ບໍລິໂພກຢາສູບໃນທຸກຮູບແບບ ຈະຖືກປະຕິບັດມາດຕະການປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງດຳລັດ ວ່າດ້ວຍການພິມຄຳເຕືອນສຸຂະພາບ ໃສ່ສິ່ງຫຸ້ມຫໍ່ຜະລິດຕະພັນຢາສູບ ສະບັບເລກທີ 370/ສນຍ, ລົງວັນທີ 23/8/2010 ດັ່ງນີ້:

- ຄັ້ງທີ 1: ກ່າວເຕືອນ, ສຶກສາອົບຮົມໃຫ້ຂຽນປະຕິຍານ;
- ຄັ້ງທີ 2: ຍຶດ ຫຼື ຮິບ ແລະ ປັບໃໝ 1 ເທົ່າຕົວ ຂອງມູນຄ່າຜະລິດຕະພັນດັ່ງກ່າວທີ່ຂາຍ ຫຼື ຈຳໜ່າຍຕາມທ້ອງຕະຫຼາດ ແລະ ສະຖານທີ່ຕ່າງໆ ໂດຍໃຫ້ຄິດໄລ່ຕາມຈຳນວນຜະລິດຕະພັນຢາສູບທີ່ກວດພົບຕົວຈິງ ຫຼື ຕາມໃບນຳສົ່ງສິນຄ້າທີ່ທາງການຮັບຮູ້ ພ້ອມທັງນຳຜະລິດຕະພັນໄປທຳລາຍຖິ້ມ;
- ຄັ້ງທີ 3: ຍຶດ ຫຼື ຮິບ ແລະ ປັບໃໝ 3 ເທົ່າຕົວ ຂອງມູນຄ່າຜະລິດຕະພັນທີ່ກ່າວໄວ້ໃນຄັ້ງທີ 2 ຂ້າງເທິງນີ້ ພ້ອມທັງນຳຜະລິດຕະພັນໄປທຳລາຍຖິ້ມ;
- ຄັ້ງທີ 4: ຍຶດ ຫຼື ຮິບ ແລະ ປັບໃໝ 5 ເທົ່າຕົວ ຂອງມູນຄ່າຜະລິດຕະພັນ ຕາມທີ່ໄດ້ກຳນົດໄວ້ໃນຄັ້ງທີ 2 ຂ້າງເທິງນີ້ ພ້ອມທັງນຳຜະລິດຕະພັນໄປທຳລາຍຖິ້ມ, ຖອນໃບອະນຸຍາດແບບຊົ່ວຄາວ ຫຼື ຖາວອນ ຕາມແຕ່ລະກໍລະນີ ໜັກ ຫຼື ເບົາ.

7. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ດຳເນີນທຸລະກິດທີ່ລະເມີດລະບຽບກົດໝາຍ ກ່ຽວກັບການຄຸ້ມຄອງການຄ້າ, ການດຳເນີນທຸລະກິດບໍ່ມີໃບທະບຽນວິສາຫະກິດ, ການຄ້າສິນຄ້ານອກລະບົບ ທີ່ມີການລະເມີດນອກເໜືອການລະເມີດທີ່ກຳນົດໄວ້ໃນ ຂໍ້ 1, 2, 3, 4, 5 ແລະ 6 ມາດຕາ 16 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

ງ. ກໍລະນີກະທຳຜິດທາງແພ່ງ ຫຼື ອາຍາ.

ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ຫາກມີການລະເມີດລະບຽບການຄຸ້ມຄອງການຄ້າ, ການດຳເນີນທຸລະກິດບໍ່ມີທະບຽນວິສາຫະກິດ ຫຼືບໍ່ຖືກວັດຖຸປະສົງ, ການຄ້າສິນຄ້ານອກລະບົບ ທີ່ເປັນການກະທຳຜິດທາງແພ່ງ ຫຼື ອາຍາ ແມ່ນໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ດຳເນີນການ ຕາມຂະບວນການຍຸຕິທຳ.

### ມາດຕາ 22 ຫຼັກການການຄິດໄລ່ອັດຕາປັບໃໝ

ການປັບໃໝທາງບໍລິຫານ ໃຫ້ຄິດໄລ່ຕາມແຕ່ລະກໍລະນີ ດັ່ງນີ້:

- ການລະເມີດລະບຽບການຄຸ້ມຄອງການຄ້າ ທີ່ມີລັກສະນະເບົາບາງ ທີ່ບໍ່ເປັນການລະເມີດທາງອາຍາ, ພາຍຫຼັງທີ່ໄດ້ກ່າວເຕືອນແລ້ວຍັງສືບຕໍ່ລະເມີດ ແມ່ນໃຫ້ຄິດໄລ່ຄ່າປັບໃໝ ໃນມູນຄ່າຕ່ຳສຸດ ທີ່ໄດ້ກຳນົດໄວ້ໃນລະບຽບ ກົດໝາຍ ຍົກເວັ້ນລະບຽບ ກົດໝາຍໄດ້ກຳນົດເປັນຢ່າງອື່ນ.
- ກໍລະນີປັບໃໝແລ້ວຍັງສືບຕໍ່ລະເມີດ ແມ່ນໃຫ້ຄິດໄລ່ຄ່າປັບໃໝໃນລະດັບກາງ, ການຄິດໄລ່ແມ່ນໃຫ້ເອົາມູນຄ່າປັບໃໝຕ່ຳສຸດ ບວກໃຫ້ມູນຄ່າສູງສຸດ ແລ້ວຫານສອງ ຍົກເວັ້ນກົດໝາຍໄດ້ກຳນົດເປັນຢ່າງອື່ນ.

- ກໍລະນີການລະເມີດນັ້ນມີລັກສະນະໜັກ, ເປັນການລະເມີດຊໍ້າຊ້ອນກັນຫຼາຍເທື່ອ ມີລັກສະນະເປັນອາຈີນ ແມ່ນໃຫ້ຄິດໄລ່ຄ່າປັບໃໝໃນມູນຄ່າສູງສຸດທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ຍົກເວັ້ນກົດໝາຍໄດ້ກຳນົດເປັນຢ່າງອື່ນ.

ຕົວຢ່າງ: ການບໍ່ຕິດປ້າຍລາຄາມີໂທດປັບໃໝແຕ່ 500.000 ກີບ ຫາ 1.000.000 ກີບ/ຄັ້ງ/ລາຍການ;

ກໍລະນີທີໜຶ່ງ: ແມ່ນຄິດໄລ່ 500.000 ກີບ/ຄັ້ງ/ລາຍການ, ຖ້າມີສອງລາຍການກໍໃຫ້ຄູນສອງ ຄ່າປັບໃໝແມ່ນ 500.000 x 2 = 1.000.000 ກີບ

ກໍລະນີທີສອງ: ຄ່າປັບໃໝ (500.000+1.000.000)/2 = 750.000 ກີບ/ຄັ້ງ/ລາຍການ;

ກໍລະນີທີສາມ: ຄ່າປັບໃໝແມ່ນ 1.000.000 ກີບ/ຄັ້ງ/ລາຍການ

- ສຳລັບກໍລະນີທີ່ມີຕົວເລກຊັດເຈນ ຫຼືເປັນສ່ວນຮ້ອຍ ກໍໃຫ້ຄິດໄລ່ຕາມນັ້ນເລີຍ.

ຕົວຢ່າງ: ການລະເມີດບໍ່ມີໃບອະນຸຍາດນຳເຂົ້າສິນຄ້າ ຖືກປັບໃໝ 30% ຂອງມູນຄ່າ.

ມູນຄ່າສິນຄ້າທີ່ລະເມີດ 10.000.000 ກີບ x 30% = 3.000.000 ກີບ.

## ໝວດທີ 6
## ການຈັດຕັ້ງປະຕິບັດ

**ມາດຕາ 23 ງົບປະມານ ແລະ ຕາປະທັບ**

ອົງການປະຕິບັດວຽກງານກວດກາການຄ້າ ມີງົບປະມານ ແລະ ກາປະທັບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານ ຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງອົງການປະຕິບັດວຽກງານກວດກາການຄ້າ.

**ມາດຕາ 24 ການຈັດຕັ້ງປະຕິບັດ**

ມອບໃຫ້ອົງການປະຕິບັດວຽກງານກວດກາການຄ້າ ໃນແຕ່ລະຂັ້ນ ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນ.

**ມາດຕາ 25 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງສະບັບເລກທີ 2552/ອຄ.ຄພນ, ລົງວັນທີ 14 ທັນວາ 2012 ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການສິບຫ້າວັນ.

ຣ. ທ. ລັດຖະມົນຕີ

ສົມຈິດ ອິນທະມິດ